# ບົດທີ 19

# ຄຳເທດສະໜາໃນຫ້ອງຊັ້ນເທິງ

(ໂຢຮັນບົດ 13 ເຖິງ ບົດ 17)



*ພະເຢຊູເທດສະໜາຫຼາຍເທື່ອໃນປາແລັດສະຕິນ, ເຮົາຈະເນັ້ນຄຳແຕ່ສາມບົດເທດເປັນຕົ້ນເລື່ອງຄຳເທດສະໜາຢູ່ຈ້າຍພູແລະຄຳເທດສະໜາຢູ່ພູໝາກກອກເທດ. ເຮົາຮຽນມາແລ້ວໃນບົດຮຽນນີ້ເຮົາຈະສຶກສາ ເລື່ອງຄຳເທດສະໜາບົດສຸດທ້າຍຄື ຄຳເທດສະໜາໃນຫ້ອງຊັ້ນເທິງ.*

**1** ໃນຂ່າວປະເສີດ 4 ເຫຼັ້ມເຮົາເຫັນແລ້ວວ່າ ສາມເຫຼັ້ມທຳອິດມີສ່ວນຄ້າຍຄືກັນ. ແມ່ນຂ່າວປະເສີດເຫຼັ້ມໃດທີ່ຍົກສະ ເໜີຄວາມເຫັນທີ່ຕ່າງກັນໄປ? ____________________________

**2** ກ່ຽວເລື່ອງກັບເຫດການໃນຫ້ອງຊັ້ນເທິງໃນຄືນກ່ອນພະອົງຈະຕາຍໂຢຮັນບັນທຶກເລື່ອງທີ່ສາມເຫຼັ້ມທຳອິດບໍ່ບັນທຶກ ເລີຍ. ສາມເຫຼັ້ມທຳອິດບັນທຶກເລື່ອງການກິນລ້ຽງເທດສະການປັດສະຄາ ແລະການເລີ້ມຕົ້ນສິນມະຫາສະນິດແຕ່ໂຢຮັນບໍ່ລາຍງານເລື່ອງນັ້ນ. ໃນໂຢຮັນ 13:1-20 ມີເຫດການປະການໜຶ່ງທີ່ອີກສາມເຫຼັ້ມບໍ່ໄດ້ບັນທຶກເລີຍຄືເຫດການໃດ?

____________________________________________________________

**3** ໃນໂຢຮັນ 13:15 ພະເຢຊູລ້າງຕີນເຂົາເພື່ອຫຍັງ? ______________________________

**4** ໃນການນັ້ນພະອົງສອນເຂົາໂດຍວິທີໃດ? (ເລືອກ)

ກ. ການກະທຳ

ຂ. ຄຳອະທິບາຍ

ຄ. ອ້ອນວອນ

**5** ເມື່ອພະເຢຊູລ້າງຕີນນັ້ນ ພະອົງສອນຢ່າງໃດໃຫ້ແກ່ເຂົາ? (ເລືອກ)

ກ. ສິດສະຕຽນຄວນຮັກສາຕົວໃຫ້ສະອາດຢູ່ສະເໝີ.

ຂ. ຄວນຮັກສາຄວາມສະອາດດ້ານຈິດວິນຍານແລະຮ່າງກາຍດ້ວຍ.

ຄ. ສິດສະຕຽນຄວນຖ່ອມຕົວລົງຮັບໃຊ້ເຊິ່ງກັນແລະກັນ.

ງ. ເປໂຕຕ້ອງການອາບນ້ຳ



**6** ພະເຢຊູສອນໃຫ້ເຂົາຮັບໃຊ້ເຊິ່ງກັນແລະກັນ ແຕ່ພະເຢຊູສອນ ໂດຍການກະທຳຄື ພະອົງເຮັດຫຍັງ? _______________

**7** ຕໍ່ໄປພະອົງບອກສາເຫດ. ໃຫ້ອ່ານ ໂຢຮັນ 13:16 ທີ່ວ່າ "ຂ້ອຍໃຊ້ບໍ່ທ່ອນໃຫຍ່ກວ່ານາຍ" ໝາຍຄວາມວ່າຖ້າພະອົງ ຈະຮັບໃຊ້ເຂົາເຂົາຄວນ_______ ຜູ້ອື່ນເຊັ່ນດຽວກັນ. (ຕື່ມຄວາມທີ່ຂາດ)

**8** ຕັ້ງແຕ່ໂຢຮັນ 13:19 ຕໍ່ໄປເຖິງບົດທີ 16 ບອກເຖິງເຫດການທີ່ຜ່ານມາແລ້ວຫຼືບອກເຖິງອະນາຄົດ? _______________

_______________________________________

_______________________________________

**9** ເລີ້ມແຕ່ໂຢຮັນ 13:21 ໄປເຖິງສຸດທ້າຍຂອງບົດທີ 16 ພະເຢຊູອະທິບາຍເລື່ອງເຫດການທີ່ຈະເກີດຂຶ້ນມາໃນອະນາຄົດ

ກ. ໃນ ໂຢຮັນ 16:5 ແລະ 16:28 ພະເຢຊູຈະໄປຫຍັງ? ______________________

ຂ. ພະອົງບອກເຂົາໄວ້ກ່ອນເພື່ອຫຍັງ? (ຢຮ 14:29) _________________________

**10** ຈາກໂຢຮັນ 13:21 ເຖິງ ບົດທີ 16 ເປັນແຕ່ຄຳອະທິບາຍ. ໂຢຮັນບົດທີ 17 ຄືຫຍັງ? (ເລືອກ)

ກ. ຄຳອ້ອນວອນ ຂ. ຄຳເທດສະໜາ ຄ. ຄຳເຕືອນສະຕິ

**11** ຮຽນມາເຖິງນີ້ແລ້ວທ່ານຈະສາມາດແຍກເປັນສ່ວນໃນໂຢຮັນ ບົດ 13 ເຖິງ 17. ໃຫ້ຕື່ມຄວາມທີ່ຂາດດັ່ງຕໍ່ໄປນີ້:

ກ. ຢຮ 13:1-20 ຄື ການກະ _________________ (ທີ່ພະອົງລ້າງຕີນຂອງພວກສາວົກ)

ຂ. ຢຮ 13:21 - 16:33 ຄືຄຳອະ _________________ (ວ່າພະອົງຈະໄປຫາພະບິດາ)

ຄ. ຢຮ ບົດທີ 17 ຄືຄຳ ________________________________ (ເພື່ອພວກສາວົກ)

**12** ກ. ເຫັນການກະທຳຂອງພະອົງໃນໂຢຮັນບົດແລະຂໍ້ໃດ? ______________________

ຂ. ຄຳອະທິບາຍເຫັນໃນໂຢຮັນບົດແລະຂໍ້ໃດແດ່? __________________________

ຄ. ຄຳອ້ອນວອນເດ? ____________________________________________

**13** ໃນສາມສ່ວນນັ້ນ ສ່ວນໃດທີ່ອ້າງເຖິງພະເຢຊູຈະໄປຫາພະບິດາ?

(ໃຫ້ອ່ານ ຢຮ 13:1 ຢຮ 14:2 ແລະ ຢຮ 17:13) _________________________

**14** ໃນ ໂຢຮັນບົດທີ 13 ເຖິງ 17 ພະອົງຕຽມພວກໃດໄວ້? ________________________

**15** ຕຽມເຂົາໄວ້ເພື່ອຍຸກໃດ? (ເລືອກ)

ກ. ອາດີດ ຂ. ປະຈຸບັນ ຄ. ອະນາຄົດ

**16** ພະອົງເຫັນວ່າໃນອະນາຄົດ ພວກສາວົກເຫຼົ່ານັ້ນຊຶ່ງເຄີຍອາໄສແຕ່ພະອົງຢູ່ສະເໝີ ຈະບໍ່ມີພະອົງຢູ່ນຳຕໍ່ໄປ. ເຂົາ ຈະຕ້ອງກໍ່ຄວາມສຳພັນໃໝ່ໃນສາມດ້ານຄື:

* ກັບໂລກ * ເຊິ່ງກັນແລະກັນ * ກັບພະບິດາເຈົ້າ

ພະເຢຊູຢາກຕຽມພວກສາວົກໄວ້ເພາະພະອົງຈະລາຈາກເຂົາໃນຍຸກໃດ? ____________

**17** ກ. ໃນໂຢຮັນບົດທີ 13 ເຖິງບົດທີ 17 ພະອົງຕຽມໃຜໄວ້? ______________________

ຂ. ຕຽມໄວ້ເພື່ອຍຸກໃດ? ____________________________________________

ຄ. ໃນອະນາຄົດນັ້ນເຂົາຈະຕ້ອງກໍ່ຄວາມສຳພັນໃໝ່ໃນສາມດ້ານໃດ?

ກັບ ____________ ເຊິ່ງ ____________ ກັບ ____________

**18** ກ່ອນອື່ນເຮົາຈະຮັບພິຈາລະນາກ່ຽວກັບຄວາມສຳພັນລະຫວ່າງເຮົາກັບໂລກ. ໃນໂຢຮັນບົດທີ 13 ເຖິງ ບົດທີ 17 ນັ້ນ ເຫັນຄຳ “ໂລກ” ຫຼາຍສິບເທື່ອ. ສ່ວນຫຼາຍອ້າງເຖິງມະນຸດສະໂລກເປັນຕົ້ນຜູ້ທີ່ຕໍ່ຕ້ານພະອົງຄື ລະບົບຂອງພະຍາມານ. ຍັງມີອີກບາງບ່ອນໃນຄຳ “ໂລກ” ນັ້ນໝາຍເຖິງແຜ່ນດິນໂລກໃຫ້ທ່ານເປີດເບິ່ງຂໍ້ພະຄຳພີຕໍ່ໄປນີ້. ຂໍ້ໃດທີ່ອ້າງເຖິງລະບົບຜູ້ຕໍ່ສູ້ພະອົງໃຫ້ຂຽນ “ລະບົບ” ແລະຂໍ້ໃດທີ່ອ້າງເຖິງແຜ່ນດິນໂລກໃຫ້ຂຽນຄຳ “ແຜ່ນດິນ”.

ກ. __________ ໂຢຮັນ 13:1 ຂ. __________ ໂຢຮັນ 14:17

ຄ. __________ ໂຢຮັນ 14:30 ງ. __________ ໂຢຮັນ 15:19.

ຈ. __________ ໂຢຮັນ 16:21 ສ. __________ ໂຢຮັນ 17:5

ຊ. __________ ໂຢຮັນ 17:14

**19** ໃນພະຄຳພີໃໝ່ຄຳວ່າ “ໂລກ” ມີຄວາມໝາຍສອງຢ່າງຄືຢ່າງໃດແດ່?

____________________________ ແລະ ____________________________

**20** ກ. ໃນໂຢຮັນ 15:19 ພວກຝ່າຍໂລກມີທ່າທີໃດຕໍ່ລູກສິດຂອງພະເຢຊູ? ____________

ຂ. ໃນໂຢຮັນ 17:16 ລູກສິດຂອງພະອົງຢູ່ຝ່າຍໂລກບໍ່? ________________________

ຄ. ໃນ ຢຮ 17:18 ພະອົງໃຊ້ພວກລູກສິດນັ້ນໄປໃສ? ________________________

ງ. ໃນ ຢຮ 15:27 ພວກສາວົກນັ້ນຈະເປັນຫຍັງເພາະເຂົາຢູ່ກັບພະອົງຕັ້ງແຕ່ຕົ້ນມາ? ____

ຈ. ໃນ ຢຮ 15:16 ຜົນຂອງພວກສາວົກຈະຕັ້ງຢູ່ເທິງປານໃດ? __________________

**21** ກ. ແມ່ນພວກໃດຈະກຽດພະອົງ? ____________________________________

ຂ. ພະເຢຊູໃຫ້ເຂົາໄປໃນໂລກເພື່ອເປັນຫຍັງ? ______________________________

**22** ໃນພະຄຳພີໃໝ່ ຄຳວ່າ “ໂລກ” ມີຄວາມໝາຍ 2 ຢ່າງໃດ?

____________________________ ແລະ ____________________________

**23** ກ. ໃນໂຢຮັນ ບົດ 13 ເຖິງບົດ 17 ແມ່ນຜູ້ໃດຕຽມພວກສາວົກໄວ້? ________________
ຂ. ຕຽມເພື່ອຍຸກໃດ? ______________________________________________
ຄ. ເຂົາຈະຕ້ອງສ້າງຄວາມສຳພັນໃໝ່ໃນ 3 ດ້ານໃດ?

__________________ ____________________ __________________

**24** ໃນໜ້າກ່ອນນີ້ ເຮົາໄດ້ຮຽນເລື່ອງຄວາມສຳພັນລະຫວ່າງພວກລູກສິດຂອງພະອົງກັບໂລກ. ຕໍ່ຈາກນີ້ໄປເຮົາຈະຮຽນກ່ຽວ ກັບຄວາມສຳພັນເຊິ່ງກັນແລະກັນ. (ຕື່ມຄວາມທີ່ຂາດ)
ກ. ໃນໂຢຮັນ 13:1-15 ພະເຢຊູຍົກສອນເລື່ອງນີ້ໂດຍການ _____________________ .
ຂ. ໃນຕໍ່ໄປເຖິງໂຢຮັນບົດທີ 16 ພະເຢຊູສອນໂດຍຄຳ _______________________ .
ຄ. ໃນບົດທີ 17 ພະອົງຊົງ ____________________________ ເພື່ອພວກສາວົກນັ້ນ.

**25** ພະເຢຊູລ້າງຕີນຂອງພວກສາວົກເພື່ອເປັນຕົວຢ່າງຕໍ່ເຂົາວ່າເຂົາຄວນ ____________ ເຊິ່ງກັນແລະກັນ. (ຕື່ມຄວາມທີ່ຂາດ)

**26** ໃນໂຢຮັນ13:14 ພວກລູກສິດຂອງພະອົງຄວນເຮັດຫຍັງເພື່ອກັນແລະກັນ? ___________

**27** ໃຫ້ອ່ານ ຢຮ 13:15 ໃນຂໍ້ນີ້ພະອົງອະທິບາຍວ່າ ການລ້າງຕີນນັ້ນເປັນແບບຢ່າງທີ່ພະອົງວາງໄວ້ເພື່ອເຮົາ. ເປັນສັນຍາລັກວ່າຄຼິດສະຕຽນຄວນເຮັດຫຍັງເພື່ອກັນແລະກັນ? __________

*ມີຄຼິດສະຕຽນບາງຄົນທີ່ຖືພິທີນີ້ ເຊັ່ນດຽວກັນກັບການຮັບສິນມະຫາສະນິດ. ເຂົາຮ່ວມກັນກິນເຂົ້າຈີ່ແລະນ້ຳອະງຸ່ນແລ້ວຕໍ່ໄປເຂົາລ້າງຕີນເຊິ່ງກັນແລະກັນ.*

**28** ກ. ໃຫ້ອ່ານໂຢຮັນ 13:34 ພະເຢຊູໃຫ້ພະບັນຍັດໃໝ່ຢ່າງໃດ? ___________________
ຂ. ໃຫ້ອ່ານໂຢຮັນ 13:35 ຖ້າຄຼິດສະຕຽນຈະມີຄວາມຮັກເຊິ່ງກັນແລະກັນຈະມີຜົນຮັບຢ່າງໃດ? _______________________________________________________
ຄ. "ຄົນທັງປວງ" ນັ້ນອ້າງເຖິງມະນຸດສະໂລກ ຫຼືອ້າງເຖິງແຕ່ພີ່ນ້ອງຄຼິດສະຕຽນ? ________

**29** ໂຢຮັນ 13:35 ບອກວ່າ "ຖ້າເຈົ້າທັງຫຼາຍມີຄວາມ ________ ເຊິ່ງກັນແລະກັນ ດັ່ງນັ້ນແຫຼະ, ຄົນ ______________ ກໍຈະໄດ້ຮູ້ວ່າເຈົ້າທັງຫຼາຍເປັນສາວົກຂອງເຮົາ." (ຕື່ມຄວາມທີ່ຂາດ)

**30** ໃນແຕ່ລະຂໍ້ຕໍ່ໄປນີ້ ໃຫ້ທ່ານໝາຍຂໍ້ໃດທີ່ສະແດງຕໍ່ໂລກວ່າເຮົາເປັນລູກສິດຂອງພະອົງຕາມໂຢຮັນ 13:35
ກ. _____ ໂດຍການເປັນພະຍານຢູ່ສະເໝີ
ຂ. _____ ໂດຍການຖືພະຄຳພີຢູ່ສະເໝີ
ຄ. _____ ໂດຍການໄປປະຊຸມນະມັດສະການທຸກໆ ອາທິດ
ງ. _____ ໂດຍມີຄວາມຮັກຕໍ່ພີ່ນ້ອງຄຼິດສະຕຽນ

**31** ຄວາມຮັກເຊິ່ງກັນແລະກັນສະແດງອອກມາໃນການເປັນອັນໜຶ່ງອັນດຽວ
ກ. ໃຫ້ອ່ານ ຢຮ 17:21 ພະເຢຊູອ້ອນວອນເພື່ອເຂົາທັງໝົດວ່າຈະເປັນຫຍັງ? _________
ຂ. ໃນ ຢຮ 17:20 ເຫັນວ່າພະເຢຊູອ້ອນວອນເພື່ອພວກສາວົກແລະຄົນໃດອີກ? ________

_______________________________________________________________

ຄ. ພວກເຮົາຢູ່ໃນປະເທດລາວໃນຍຸກນີ້ ເຂົ້າຮ່ວມບໍ່? ___________________________
ງ. ເຮົາຄວນຮັກພີ່ນ້ອງຄຼິດສະຕຽນເຖິງຂະໜາດໃດ? (ເລືອກ)
____ ຮັກແຕ່ຜູ້ທີ່ຮັກເຮົາ ____ ຮັກແຕ່ຍາດພີ່ນ້ອງ ____ ຮັກຢ່າງບໍ່ຈຳກັດ
ຈ. ໃນ ຢຮ 17:23 ພະເຢຊູອ້ອນວອນໃຫ້ເຮົາເປັນອັນໜຶ່ງອັນດຽວກັນຢ່າງໃດ? ________

**32** ຄວາມສຳພັນລະຫວ່າງພວກຄຼິດສະຕຽນ ຄວນຈະປະກອບໂດຍຄວາມ ___________ ແລະ ໂດຍເປັນອັນ ________________________________________ (ຕື່ມຄວາມທີ່ຂາດ)

**33** ແມ່ນໃນສາມດ້ານໃດທີ່ພວກລູກສິດຂອງພະອົງຕ້ອງຈັດຄວາມສຳພັນໃໝ່?

____________________ ___________________ _____________________

**34** ກ. ພະເຢຊູບອກວ່າ ຄົນໃນໂລກຈະມີທ່າທີໃດຕໍ່ພວກລູກສິດຂອງພະອົງ? _____________
ຂ. ແຕ່ພະເຢຊູສັ່ງໃຫ້ພວກລູກສິດອອກໄປເວົ້າຄວາມໃດໃຫ້ໂລກຟັງ? _______________

**35** ສຸດທ້າຍເຮົາຈະຮຽນເລື້ອງຄວາມສຳພັນຢ່າງສຳຄັນທີ່ສຸດຄື ພວກຄຼິດສະຕຽນກັບພະເຈົ້າ
ກ. ໃນໂຢຮັນບົດທີ 13 ເຖິງບົດ 17 ແມ່ນໃຜຕຽມພວກໃດໄວ້ເພື່ອໃນອະນາຄົດ?

_______________________________________________________________

ຂ. ໃຫ້ອ່ານໂຢຮັນ 14:18 ທີ່ພະອົງຈະລາຈາກເຂົາໄປ ແມ່ນວ່າພະອົງຈະຖິ້ມເຂົາຢ່າງເປັນກຳພ້າບໍ່? ______________________________________________________

**36** ກ. ໃນໂຢຮັນ 13:34-35 ພະເຢຊູສັ່ງພວກສາວົກຢ່າງໃດ? ______________________
ຂ. ໃນໂຢຮັນ 17:21 ພະເຢຊູອ້ອນວອນໃຫ້ໃຜເປັນອັນໜຶ່ງອັນດຽວກັນ? ____________
ຄ. ໃນໂຢຮັນ 14:23 ຖ້າຜູ້ໃດຮັກພະອົງຈະສະແດງອອກຢ່າງໃດ? ________________

**37** ຕໍ່ໄປໃນໂຢຮັນ 14:23 ນັ້ນ ການຮັກພະອົງແລະການຖືຮັກສາພະບັນຍັດຂອງພະອົງ ຈະເກີດມີຜົນວ່າ ໃຜຈະມາຕັ້ງຢູ່ ກັບຜູ້ນັ້ນ? _______________________________________

**38** ໃຫ້ທ່ານສະຫລູບເລື້ອງນັ້ນໂດຍຕື່ມຄວາມທີ່ຂາດດັ່ງຕໍ່ໄປນີ້: (ຕື່ມຄວາມທີ່ຂາດ)
ໂຢຮັນ 14:23 ສອນວ່າຖ້າເຮົາ _______ ພະອົງ ເຮົາຈະຖື _________ ພະທຳຂອງພະອົງ, ແລ້ວພະອົງຈະມາຕັ້ງ ________ ກັບເຮົາ.

**39** ມີເງື່ອນໄຂໃດກ່ອນ ເພື່ອຈະໃຫ້ພະອົງມາຕັ້ງຢູ່ກັບເຮົາ? (ຕື່ມຄວາຂາດ)
ເຮົາຕ້ອງ ___________ ພະອົງແລະ _______________________ ພະທຳຂອງພະອົງ.

*ທ່ານເອງເຄີຍສຳນຶກໃນໃຈວ່າທ່ານນັ່ງບ່ອນໃດພະອົງກໍນັ່ງບ່ອນນັ້ນ. ທ່ານໄປທາງໃດພະອົງກໍໄປນຳໄດ້. ໃຫ້ທ່ານສຳນຶກຕົວວ່າເປັນຄວາມຈິງແລ້ວສອນໃຫ້ຜູ້ອື່ນສຳນຶກເຊັ່ນດຽວກັນ.*

**40** ໃຫ້ອ່ານ ໂຢຮັນ 14:16

ກ. ພະເຢຊູສັນຍາວ່າຈະປະທານຜູ້ຊ່ວຍອີກຜູ້ໜຶ່ງໃຫ້ແກ່ພວກລູກສິດ. ຜູ້ຊ່ວຍນັ້ນຈະຢູ່ນຳເຮົາເທິງປານໃດ? ____________________

ຂ. ໃນໂຢຮັນ 14:26 ເຫັນວ່າຜູ້ຊ່ວຍນັ້ນຄືໃຜ? ____________________

*ໃນຫຼັກສູດນັດທາຍເຫຼັ້ມ 6 ເຮົາຈະສຶກສາເລື່ອງພະວິນຍານຢ່າງລະອຽດ.*

| | | |
|---|---|---|
| ຝຶກ: | ໃຫ້ທ່ານເອົາສໍສີຊຽວຂີດສີ່ຫຼ່ຽມອ້ອມຕອນພະຄຳພີທີ່ສອນເລື່ອງພະວິນຍານບໍລິສຸດຕໍ່ໄປນີ້: | |
| | ໂຢຮັນ 14:16-17 | ໂຢຮັນ 16:7-15 |
| | ໂຢຮັ້ນ 14:25-26 | ໂຢຮັນ 15:26-27 |
| | ແລ້ວຂຽນຄຳວ່າ “ພະວິນຍານ” ໃສ່ຂອບເຈ້ຍຂ້າງຂໍ້ພະຄຳພີເຫຼົ່ານັ້ນດ້ວຍ. | |

**41** ກ. ຜູ້ໃດທີ່ຮັກພະອົງຈະຖືຮັກສາຫຍັງ? ____________________

ຂ. ຄວາມຮັກຕໍ່ພະອົງແລະການຖືຮັກສາພະທຳຈະມີຜົນຮັບຢ່າງໃດ?

____________________

ຄ. ພະອົງຈະຕັ້ງຢູ່ກັບເຮົາໃນສະພາບໃດ? ____________________

**42** ໃນໂຢຮັນບົດທີ 15 ພະອົງຍົກຕົວຢ່າງມາ.

ກ. ໃນ ຢຮ 15:4 ລູກສິດຂອງພະອົງຈິ່ງເຂົ້າສະນິດຢູ່ກັບໃຜ? ____________________

ຂ. ໃນ ຢຮ 15:5 ໃຜປຽບເໝືອນເຄືອອະງຸ່ນ?

____________________

ຄ. ໃຜເປັນກິ່ງ? ____________________

*ສົມຄວນທີ່ຈະຮັກພະເຢຊູ ແລະຮັກພີ່ນ້ອງຄຼິດສະຕຽນດ້ວຍ!*



**43** ຖ້າເຮົາຮັກພະອົງທັງເຊື່ອຟັງພະອົງເຮົາຈະຮັບພະພອນຈາກພະອົງຫຼາຍປະການດັ່ງຕໍ່ໄປນີ້: (ໃຫ້ທ່ານເອົາຄວາມຈາກຂ້າງຊ້າຍຈັບຄູ່ກັບຂໍ້ພະຄຳພີຂ້າງຂວາ)

ກ. ຮັບຄຳສອນແລະເຕືອນ ______ ໂຢຮັນ 14:26

ຂ. ຈະເກີດຜົນ ______ ໂຢຮັນ 14:27

ຄ. ມີຄວາມຍິນດີ ______ ໂຢຮັນ 15:5

ງ. ສິ່ງໃດທີ່ຂໍຈະເກີດມີ ______ ໂຢຮັນ 15:7

ຈ. ຮັບຄວາມສະຫງົບສຸກ ______ ໂຢຮັນ 15:11

ສ. ຮັບການຊຳລະ ______ ໂຢຮັນ 17:19

ຝຶກ: ໃຫ້ທ່ານເອົາເຈ້ຍສາມແຜ່ນ ໃນແຜ່ນທໜຶ່ງໃຫ້ຂຽນຄຳວ່າ "ສຳພັນກັບໂລກ." ແຜ່ນທີສອງໃຫ້ຂຽນ "ສຳພັນເຊິ່ງກັນແລະກັນ" ແລະແຜ່ນທີສາມຂຽນ "ສຳພັນກັບພະເຈົ້າ."

ແລ້ວໃຫ້ທ່ານອ່ານຊ້າໆໃນພະທຳໂຢຮັນບົດທີ 13 ຕະຫຼອດເຖິງບົດທີ 17. ເທື່ອໃດທີ່ທ່ານເຫັນຄຳສອນເລື່ອງຄວາມສຳພັນລະຫວ່າງຄຼິດສະຕຽນເຮົາກັບໂລກໃຫ້ຂຽນໃສ່ເຈ້ຍໃບນັ້ນ. ເທື່ອໃດທີ່ເຫັນຄຳສອນເລື່ອງຄວາມສຳພັນເຊິ່ງກັນແລະກັນລະຫວ່າງຄຼິດສະຕຽນໃຫ້ຂຽນໃສ່ໃບນັ້ນ ໆ ລ ໆ.

ໃຫ້ທ່ານຮັບພະພອນຈາກພະເຈົ້າຢ່າງທີ່ພະອົງສັນຍາໄວ້ ເພື່ອຄົນທີ່ເຊື່ອຟັງແລະຖືຮັກສາພະທຳຂອງພະອົງ. ຕໍ່ໄປໃຫ້ທ່ານຮັບພິຈາລະນາເລື່ອງຄຳຖາມດັ່ງຕໍ່ໄປນີ້ເພື່ອຈະແລກປ່ຽນຄວາມຄຶດເຫັນກັບໝູ່ໃນປະຊຸມຂ້າງໜ້າ.

* ທີ່ເຂົາຢູ່ໃນໂລກແຕ່ບໍ່ຢູ່ຝ່າຍໂລກ (ຢຮ 17:15-16) ໝາຍຄວາມວ່າຢ່າງໃດ?
* ເພື່ອນບ້ານຂອງເຮົາຈະສັງເກດຮູ້ວ່າເຮົາເປັນອັນໜຶ່ງອັນດຽວກັນກັບພີ່ນ້ອງຄຼິດສະຕຽນໄດ້ຢ່າງໃດ?
* ຖ້າພະເຢຊູມາຕັ້ງຢູ່ກັບເຮົາຈະສະແດງອອກຢ່າງໃດ?

## ຄຳຕອບ:

**1** *ໂຢຮັນ*

**2** *ພະເຢຊູຊົງລ້າງຕີນຂອງພວກສາວົກ*

**3** *ເພື່ອວາງແບບຢ່າງໃຫ້ເຂົາ*

**4** *ກ ຖືກ*

**5** *ຄ ຖືກ*

**6** *ລ້າງຕີນເຂົາ*

**7** *ຮັບໃຊ້*

**8** *ອະນາຄົດ*

**9** *ກ. ໄປຫາພະບິດາ (ຜູ້ຊົງໃຊ້ມາ) ຂ. ຈະໄດ້ເຊື່ອ*

**10** *ກ ຖືກ*

**11** *ກ. ກະທຳ ຂ. ອະທິບາຍ ຄ. ອ້ອນວອນ*

**12** *ກ. ໂຢຮັນ 13:1-20 ຂ. ໂຢຮັນ 13:21 - 16:33 ຄ. ໂຢຮັນບົດທີ 17*

**13** *ໝົດທັງສາມ*

**14** *ສາວົກ*

**ຄຳຕອບ (ຕໍ່):**

**15** ຄ ຖືກ

**16** ອະນາຄົດ

**17** ກ. ສາວົກ ຂ. ອະນາຄົດ ຄ. ໂລກ ກັບແລະກັບ ພະບິດາເຈົ້າ

**18** ກ. ແຜ່ນດິນ ຂ. ລະບົບ ຄ. ລະບົບ ງ. ລະບົບ ຈ. ແຜ່ນດິນ ສ. ແຜ່ນດິນ ຊ. ລະບົບ

**19** ແຜ່ນດິນໂລກ ແລະ ລະບົບຜູ້ຕໍ່ຕ້ານພະເຈົ້າ (ຄຳຄ້າຍຄືກັນກໍໄດ້)

**20** ກ. ກຽດຊັງ ຂ. ບໍ່ ຄ. ໃຊ້ເຂົາໄປໃນໂລກ ງ. ພະຍານ ຈ. ຖາວອນ

**21** ກ. ໂລກ ຂ. ພະຍານ

**22** ແຜ່ນດິນໂລກ ແລະ ລະບົບຜູ້ຕໍ່ຕ້ານພະເຈົ້າ.

**23** ກ. ພະເຍຊູ ຂ. ອະນາຄົດ ຄ. ກັບໂລກ ກັບແລະກັບ ກັບພະບິດາເຈົ້າ

**24** ກ. ກະທຳ ຂ. ອະທິບາຍ ຄ. ອ້ອນວອນ

**25** ຮັບໃຊ້

**26** ລ້າງຕີນ

**27** ຮັບໃຊ້

**28** ກ. ໃຫ້ຮັກເຊິ່ງກັນແລະກັນ ຂ. ຄົນທັງປວງຈະຮູ້ວ່າເປັນສາວົກຂອງພະອົງ
ຄ. ມະນຸດສະໂລກ

**29** ຮັກ... ທັງປວງ

**30** ງ ຖືກ

**31** ກ. ອັນໜຶ່ງອັນດຽວກັນ ຂ. ຄົນທີ່ວາງໃຈໃນພະອົງເພາະຖ້ອຍຄຳຂອງເຫຼົ່າສາວົກ
ຄ. ຮ່ວມ ງ. ຮັກຢ່າງບໍ່ຈຳກັດ ຈ. ສົມບູນ

**32** ຮັກ... ໜຶ່ງອັນດຽວກັນ

**33** ກັບໂລກ ເຊິ່ງກັນແລະກັນ ກັບພະບິດາເຈົ້າ

**34** ກ. ກຽດຊັງ ພະຍານ

**35** ກ. ພະເຍຊູຕຽມພວກສາວົກ ຂ. ບໍ່

**36** ກ. ໃຫ້ຮັກເຊິ່ງກັນແລະກັນ ຂ. ລູກສິດພະອົງ ຄ. ຈະຖືຮັກສາພະທຳຂອງພະອົງ

**37** ພະເຍຊູແລະພະບິດາເຈົ້າ

**38** ຮັກ... ຮັກສາ... ຢູ່

**39** ຮັກ... ຖືຮັກສາ

**40** ກ. ຕະຫຼອດໄປເປັນນິດ ຂ. ພະວິນຍານບໍລິສຸດ

**41** ກ. ພະທຳຂອງພະອົງ ຂ. ພະອົງຈະມາຕັ້ງຢູ່ກັບຜູ້ນັ້ນ ຄ. ພະວິນຍານບໍລິສຸດ (ຜູ້ຊ່ວຍ)

**42** ກ. ພະອົງ ຂ. ພະອົງເອງ ຄ. ພວກລູກສິດ (ເຮົາທີ່ເປັນຄຣິດສະຕຽນ)

**43** ກ. ໂຢຮັນ 14:26 ຂ. ໂຢຮັນ 15:5 ຄ. ໂຢຮັນ 15:11
ງ. ໂຢຮັນ 15:7 ຈ. ໂຢຮັນ 14:27 ສ. ໂຢຮັນ 17:19